ທະນາຄານແຫ່ງ ສປປ ລາວ

ກົມບັນຊີ-ການເງິນ

# ປື້ມຄູ່ມືນຳໃຊ້
# ຜັງບັນຊີສະຖາບັນການເງິນ

ປີ 2016

## ຄຳນຳ

ໃນຂະນະທີ່ຂະແໜງການເງິນ-ການທະນາຄານໃນ ສປປ ລາວ ພວມໄດ້ຮັບຄວາມສົນໃຈຈາກນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ສະຖາບັນການເງິນປະເພດຕ່າງໆ ກໍ່ມີການຂະຫຍາຍຕົວຂຶ້ນຢ່າງວ່ອງໄວ. ຄຽງຄູ່ກັນນີ້ທະນາຄານແຫ່ງ ສປປ ລາວ ກໍ່ພວມສຸມໃສ່ຜັນຂະຫຍາຍກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ) ແລະ ພັດທະນາຜັງບັນຊີຂອງທະນາຄານ ແລະ ສະຖາບັນການເງິນແມ່ນແນໃສ່ ເພື່ອໃຫ້ແທດເໝາະກັບການຂະຫຍາຍຕົວທາງເສດຖະກິດ ໃນໄລຍະໃໝ່ ທີ່ມີການເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ກົມບັນຊີ-ການເງິນ ທະນາຄານແຫ່ງ ສປປ ລາວ ໄດ້ສ້າງຄູ່ມືການນຳໃຊ້ຜັງບັນຊີຂອງສະຖາບັນການເງິນອອກ ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ ແລະ ອຳນວຍຄວາມສະດວກໃຫ້ແກ່ບັນດາສະຖາບັນການເງິນທີ່ເຄື່ອນໄຫວຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ. ການສ້າງຄູ່ມືການນຳໃຊ້ຜັງບັນຊີຂອງສະຖາບັນການເງິນສະບັບນີ້ແມ່ນການຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການຮັບຮອງແຜນຜັງການບັນຊີ ແລະ ເອກະສານລາຍງານການເງິນສະຖາບັນການເງິນທີ່ຂຶ້ນກັບການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 365/ທຫລ, ລົງວັນທີ 21/05/2014, ເພື່ອເປັນບ່ອນອີງໃຫ້ແກ່ບັນດາສະຖາບັນການເງິນເປັນເອກະພາບໃນການຈັດຕັ້ງປະຕິບັດລະບົບບັນຊີໃໝ່ໃຫ້ມີຄວາມຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ, ໃນນີ້ໄດ້ລົງເລິກການອະທິບາຍເນື້ອໃນທຸກໆປະເພດຂອງບັນຊີຊັບສິນ, ໜີ້ສິນ, ທຶນ, ລາຍຈ່າຍ ແລະ ລາຍຮັບ.

ຄູ່ມືການນຳໃຊ້ຜັງບັນຊີຂອງສະຖາບັນການເງິນສະບັບນີ້ ຍ່ອມປັດສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງ ຈຶ່ງຮຽກຮ້ອງມາຍັງບັນດາພາກສ່ວນກ່ຽວຂ້ອງຊ່ວຍຕຳນິຕິຊົມ ແລະ ປະກອບຄຳເຫັນມາຍັງກົມບັນຊີ-ການເງິນ ທະນາຄານແຫ່ງ ສປປ ລາວ ເພື່ອເປັນຂໍ້ມູນພິຈາລະນາປັບປຸງໃຫ້ດີຂຶ້ນໃນແຕ່ລະໄລຍະ.

ນະຄອນຫຼວງວຽງຈັນ, ວັນທີ: 23 FEB 2016

**ຫົວໜ້າກົມບັນຊີ-ການເງິນ**

ທະນາຄານ ແຫ່ງ ສປປ ລາວ ກົມບັນຊີ-ການເງິນ

**ນ. ຂັນແກ້ວ ຫຼ້ານະນິເງົາ**